ວາລະສານວິທະຍາສາດ ມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 2, ກໍລະກົດ - ທັນວາ 2020, ເລກທະບຽນ ISSN 2521-0653

# ການພັດທະນາຮູບແບບການຮຽນຮູ້ ຜ່ານຄວາມສຳພັນເຫດການ (KEM) ສຳລັບການສອນຂອງຄູ ທີ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ສົກສຶກສາ 2018-2020[1]

**ໄຊພອນ ຄົດໄຊໂຍ [2], ເພັດສະໝອນ ສຸລິວົງ, ແສງດາວ ເພັດສິມບັດ, ແສງເດືອນ ສີວັນຄຳ ແລະ ເຢຍເຮີ ເລຍມາເຮີ**

*ພາກວິຊາ ຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ*

## ບົດຄັດຫຍໍ້

ການຄົ້ນຄ້ວາຄັ້ງນີ້ ເປັນການທົດລອງນຳໃຊ້ຮູບແບບການຮຽນຮູ້ ຜ່ານຄວາມສຳພັນເຫດການ (Key Explored Method: KEM) ເຂົ້າໃນການສອນວິຊາປະຫວັດ ແລະ ຂະບວນກຳມະກອນສາກົນ ເຊິ່ງເປັນໜຶ່ງໃນຂະບວນການພັດທະນາຮູບແບບການຮຽນຮູ້ໃໝ່ ຂຶ້ນມາໃນຄະນະສຶກສາສາດ, ໂດຍມີຈຸດປະສົງ ເພື່ອສຶກສາປະສິດທິພາບ ແລະ ປະສິດທິຜົນ ຂອງແຜນກິດຈະກຳຮຽນຮູ້ແບບໃໝ່ນີ້ຕາມເກນ 80/80 ພ້ອມທັງປະເມີນທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ຮູບແບບການຮຽນຮູ້ດັ່ງກ່າວ. ກຸ່ມຕົວຢ່າງຂອງການຄົ້ນຄ້ວາ ແມ່ນເຈາະຈົງເອົານັກສຶກສາຄູການເມືອງປີສຸດທ້າຍທັງ 2 ຮຸ່ນ ລວມ 58 ຄົນ, ຍິງ 24 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາປະກອບມີແຜນກິດຈະກຳການຮຽນແບບ KEM, ແບບວັດຜົນສຳເລັດ ($r_{xy}$) ຢູ່ລະຫວ່າງ 0.29-1.00 ແລະ ຄວາມເຊື່ອໝັ້ນທັງສະບັບ 0.94; ແບບວັດທັດສະນະຄະຕິທີ່ເປັນຊຸດຄຳຖາມແບບ Rating scale ຈຳນວນ 75 ຂໍ້ ເຊິ່ງມີ IOC = 1.00; ແລະ ຄ່າຄວາມເຊື່ອໝັ້ນທັງສະບັບ 0.964.

ຜົນການຄົ້ນຄ້ວາພົບວ່າ:

1. ແຜນກິດຈະກຳແບບ KEM ທີ່ທົດລອງໃຊ້ເຂົ້າໃນການສອນ ວິຊາ ປະຫວັດ ແລະ ຂະບວນກຳມະກອນສາກົນ ແມ່ນມີປະສິດທິພາບເທົ່າກັບ 78.22/78.78 ເຊິ່ງຫຼຸດຈາກເກນທີ່ກຳນົດໄວ້ 80/80

2. ດັດສະນີປະສິດທິຜົນການຮຽນ ວິຊາ ປະຫວັດ ແລະ ຂະບວນກຳມະກອນສາກົນ ດ້ວຍຮູບແບບ KEM ແມ່ນເທົ່າກັບ 0.68243; ສະແດງເຖິງຄວາມກ້າວໜ້າຂອງຜົນການຮຽນທີ່ເພີ່ມຂຶ້ນເກືອບ 69%

3. ທັດສະນະຄະຕິຂອງນັກສຶກສາ ຕໍ່ກັບຮູບແບບການຮຽນຮູ້ KEM ແມ່ນຢູ່ໃນລະດັບດີຫຼາຍ

ໂດຍສະຫຼຸບແລ້ວເຫັນວ່າ ຮູບແບບການຮຽນຮູ້ KEM ທີ່ກຳລັງພັດທະນາຂຶ້ນໃນຄະນະສຶກສາສາດ ແມ່ນມີປະສິດທິພາບ ແລະ ປະສິທິຜົນດີ ພ້ອມທັງໄດ້ຮັບການຕອບຮັບຈາກນັກສຶກສາໃນທາງບວກ ເຊິ່ງນັບວ່າເປັນຂໍ້ມູນທີ່ເປັນປະໂຫຍດຫຼາຍສຳລັບການຕໍ່ຍອດພັດທະນາ ແລະ ສ້າງຄູ່ມືສະບັບສົມບູນຂຶ້ນມາໃນອະນາຄົດ

**ຄຳສຳຄັນ:** ຄວາມສຳພັນເຫດການ, ປະສິດທິພາບ, ປະສິດທິຜົນ, ທັດສະນະຄະຕິ

---

[1] **ການອ້າງອີງພາສາລາວ:** ໄຊພອນ ຄົດໄຊໂຍ ແລະ ຄະນະ. (2020). **ການພັດທະນາຮູບແບບການຮຽນຮູ້ ຜ່ານຄວາມສຳພັນເຫດການ (KEM) ສຳລັບການສອນຂອງຄູ ທີ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ສົກສຶກສາ 2018-2020**, *ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ສະບັບທີ: 6, ເຫຼັ້ມ 2, ໜ້າທີ: 86-94.*

[2] **ຕິດຕໍ່ພົວພັນ:**

ໄຊພອນ ຄົດໄຊໂຍ, ພາກວິຊາ ຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ,

Tel: +856 020 29335574, E-mail: saiphonekhot@outlook.com

# Learning activity development through Key Explored Method (KEM) for the instructor in Faculty of Education, Souphanouvong University, Academic year 2018-2020

**Saiphone KHOTSAIGNOH[3], Phetsamone SOULIVONG, Sengdao PHETSOMBATH, Sengdeuan SYVANKHAM and YearHer LIAMAHER**

*Department of Science Teacher, Faculty of Education, Souphanouvong University.*

**ABSTRACT**

This research intended to conduct an experiment through the use of Key Explored method (KEM) in the instruction of History of international labor movement, which a step of the development of new learning method in Faculty of Education, Souphanouvong University; The research aimed to develop the effectiveness of new teaching technique via KEM with the set creteria 80/80, to find out the efficiency index (E.I) of the learning archievment and evaluate the student`s perspectives who participated in this. The sampling students focused on final year students who have been majoring in political science 58 students, the instrument of this research consists of KEM teaching plan, there was an objective test with multiple choicewith difficulty level ranged between 0.40-0.86; a discrimination level ($r_{xy}$) between 0.29-0.96; and the questionnaire for assessing the student`s perpective with 5 difference rating scale in respond to 75 items with IOC = 1; the reliability was of .964

The research findings found that:

1. The effectiveness of applying KEM teacing plan in the instruction was (E1/E2) 78.22/78.78; which lower than the set creteria of 80/80
2. The effective index (E.I) of the student`s learning via KEM for History of international labor movement equaled 0.68243 and it showed that the student`s progress was 68.24%
3. Overall, the attitude of the student about KEM activities was overall at the high lavel

In conclusion, it was found that the use of KEM activities in the instruction of History of international labor movement for political students was efficient as expected and highly accepted by the students, it was very beneficial to teaching-learning, leading to the development of an effective teaching handbooks or manual in the future

**Keywords:** Key explored method, Effectiveness, effective index, Attitude

[3] ***Correspondence:***

*Saiphone KHOTSAIGNOH, Department of Social Science, Faculty of Education, Souphanouvong University, E-mail: saiphonekhot@outlook.com Tel: +856 020 29335574*

## 1. ພາກສະເໜີ

ຖືເອົາການພັດທະນາຊັບພະຍາກອນມະນຸດ" ມະນຸດ ເປັນປັດໄຈຕັດສິນການພັດທະນາປະເທດຊາດ ຄຸ້ມຄອງ ແລະ ພັດທະນາສັງຄົມຢ່າງ ,ໃນໄລຍະໃໝ່ ໃນ .ປະດິດສ້າງ ເພື່ອສ້າງສັງຄົມຍຸຕິທຳ ແລະ ສີວິໄລ ນັ້ນຖືຄົນເປັນເປົ້າໝາຍ ແລະ ຈຸດສຸມຂອງການ ພັດທະນາ ສືບຕໍ່ເສີມຂະຫຍາຍຜົນສຳເລັດຂອງການ ປະຕິຮູບການສຶກສາ ກໍ່ຄືການພັດທະນາຊັບພະຍາ ກອນມະນຸດຕາມ ຫຼັກມູນຂອງ 5 ລັກສະນະ ແລະ 3 ການສຶກສາແຫ່ງຊາດໃຫ້ມີຄຸນນະພາບມາດຕະຖານ ສືບຕໍ່ສ້າງ ; ສາກົນ ແລະ ທັນສະໄໝ ,ຂອງພາກພື້ນ ມີຄວາມຮັບຜິດຊອບ ,ຄົນລາວໃຫ້ເປັນພົນລະເມືອງດີ ມີສະຕິເຄົາລົບກົດໝ ,ຕໍ່ພັນທະພົນລະເມືອງ ,ຕໍ່ສັງຄົມ ຮັກອັນດີອັນຖືກຕ້ອງ ພ້ອມກັນນັ້ນ ,າຍ ກໍ່ເດັດດ່ຽວ ຕ້ານອັນຫຍໍ້ທໍ້ຫຼ້າຫຼັງ ແລະ ທັດສະນະຜິດເຂວຕ່າງໆ , ກອງ) "ຕ້ານການເຊື່ອມຖອຍດ້ານແນວຄິດຄຸນສົມບັດ ປະຊຸມໃຫຍ່ຄັ້ງທີX ຂອງພັກ, 2016, ໜ້າ .(44-43 .

ໃນການປະຕິບັດ ໜ້າທີ່ຍຸດທະສາດຂອງຊາດ 2 ໃນນັ້ນຄືສ້າງສາພັດທະນາປະເທດຊາດ ນັບວ່າເປັນ 1 ພາລະກິດທີ່ມີຄວາມສຳຄັນຢ່າງປະຕິເສດບໍ່ໄດ້ ໃນ ພາລະກິດປົກປັກຮັກສາໝາກຜົນຂອງການປະຕິວັດ ຊາດເວົ້າລວມເວົ້າສະເພາະກໍ່ຄືການຮັບປະກັນການ ພັດທະນາເສດຖະກິດສັງຄົມ ໃຫ້ນັບມື້ນັບ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ເພື່ອຄວາມສົມບູນພູນສຸກ ຂອງປະຊາຊົນ ເຊິ່ງໃນພາລະກິດອັນສຳຄັນ ແລະ ມີ ກຽດຊາດອັນນີ້ ການພັດທະນາຄົນພາຍໃນຊາດໃຫ້ມີ ຄວາມຮູ້ຄວາມສາມາດອັນແນ່ນອນ ເພື່ອຮັບໃຊ້ ພາລະກິດກໍ່ສ້າງພື້ນຖານວັດຖຸເຕັກນິກຂອງຊາດບົນ ເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມຢ່າງມີໄຊແຕ່ເຖິງ , ຢ່າງໃດກໍ່ຕາມ ບົນພື້ນຖານຄວາມເປັນຈິງຂອງການ ປະຕິບັດວຽກງານສ້າງສາລະບອບໃໝ່ນັ້ນ ມັນມີ ຄວາມຈຳເປັນຢ່າງພາວະວິໄສ ສຳລັບຄວາມຕ້ອງການ ບຸກຄະລາກອນຊາດ ທີ່ພຽບພ້ອມໄປດ້ວຍຄວາມ ສາມາດ ແລະ ຄຸນທາດການເມືອງ ເພື່ອຮັບປະກັນການ ສ້າງສາພັດທະນາປະເທດຊາດຕາມທິດສັງຄົມນິຍົມ ດັ່ງ ປະທານ ໄກສອນ ພົມວິຫານ ຜູ້ນຳອັນແສນເຄົາລົບ ຮັກຂອງພວກເຮົາ ເຄີຍກ່າວວ່າ ຄົນມີຄວາມຮູ້ຄວາມ" ສາມາດ ແຕ່ຂາດຄຸນສົມບັດແມ່ນບໍ່ສາມາດໃຊ້ການ ຈື "ຄູ" ມັນຈຶ່ງປະຕິເສດບໍ່ໄດ້ເລີຍວ່າ "ໄດ້ງເປັນຜູ້ທີ່ ເປັນຕົວແປຫຼັກໃນສົມການ ຂອງຂະບວນການ ປະຕິວັດແນວຄິດຄຸນສົມບັດສິນທຳປະຕິວັດນີ້ໃຫ້ເກີດ ຂຶ້ນກັບເຫຼົ່ານັກຮຽນນັກສຶກສາ ຜູ້ທີ່ຈະກາຍເປັນກຳລັງ ຫຼັກຂອງຊາດໃນອະນາຄົດ .

ເມື່ອພາລະກິດອັນຍິ່ງໃຫຍ່ຂອງຊາດ ໄດ້ມອບ ຄວາມຮັບຜິດຊອບອັນມີກຽດນີ້ໃຫ້ກັບບຸກຄະລາກອນ ຄູໃນຖານະວິສະວະກອນແຫ່ງດວງວິນຍານ ເຊິ່ງເປັນຜູ້ ທີ່ມີໜ້າທີ່ຫຼັກໃນການສຶກສາອົບຮົມຄົນຮຸ່ນໃໝ່ ໃຫ້ມີ ຄວາມຮູ້ຄວາມສາມາດ ແລະ ທີ່ຂາດບໍ່ໄດ້ຄືຕ້ອງມີ ຄຸນສົມບັດສິນທຳປະຕິວັດເຊື່ອໝັ້ນຢ່າງຕາຍໃຈ , ບົດບາດການນຳພາຂອງພັກໃນພາລະກິດສ້າງສາ ສິ່ງສຳຄັນທີ່ສຸດຄືຕົວ ,ດັ່ງນັ້ນ .ພັດທະນາປະເທດຊາດ ຄູເອງ ຜູ້ເປັນນັກປະຕິວັດໃນສະໜາມຮົບວັດທະນະທຳ ນັ້ນໝາຍຄວາມວ່າ ໃນວຽກງານການສ້າງຄູນັ້ນຕ້ອງ ໄດ້ເອົາໃຈໃສ່ເປັນພິເສດ ເພື່ອຮັບປະກັນວ່າຄູທີ່ຖືກ ຜະລິດອອກມານັ້ນຈະພຽບພ້ອມໄປດ້ວຍຄວາມຮູ້ ຄວາມສາມາດ ແລະ ຄຸນສົມບັດສິນທຳປະຕິວັດ ກຽມພ້ອມຮັບໃຊ້ໜ້າທີ່ການເມືອງຂອງພັກໄດ້ຢ່າງມີ ປະສິດທິພາບໃນອະນາຄົດ.

ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ກໍ່ແມ່ນໜຶ່ງໃນຈຳນວນ 12 ສະຖາບັນສ້າງຄູຂອງ ປະເທດລາວເຮົາໃນປັດຈຸບັນ ເຊິ່ງໄດ້ຮັບການສ້າງຕັ້ງ ຂຶ້ນເປັນຄະນະທຳອິດຂອງມະຫາວິທະຍາໄລສຸພານຸວົງ ໃນປີ ໂດຍມີພາລະບົດບາດໃນການເປັນບ່ອນສ້າງ ແລະ ພັດທະນາບຸກຄະລາກອນຄູ ເພື່ອຕອບສະໜອງ ໃຫ້ແກ່ວຽກງານການພັດທະນາເສດຖະກິດສັງຄົມ - ຕາມວິໄສທັດຮອດປີ 2030ຕ້ອງສ້າງໃຫ້ເປັນສູນກາງ ແຫ່ງຄວາມເປັນເລີດ ໃນດ້ານການຜະລິດ ແລະ ພັດທະນາວິຊາຊີບຄູ ເພື່ອພັດທະນາທ້ອງຖິ່ນຢ່າງຍືນຍົງ ຢູ່ ເຂດພາກເໜືອຂອງສປປ ລາວ ຕາມຄຳຂັວນ "ສ້າງ

ຄົນໃຫ້ມີຄວາມຮູ້, ສ້າງຄູໃຫ້ມີຄຸນນະພາບ, ມີວິໄນ ໃສ່ໃຈພັດທະນາທ້ອງຖິ່ນ"

ເພື່ອປະຕິບັດພາລະບົດບາດ ແລະ ໜ້າທີ່ອັນມີກຽດທີ່ຊາດ ແລະ ສັງຄົມມອບໝາຍໃຫ້ນັ້ນ ການພັດທະນາຕົນເອງຂອງສະຖາບັນພວກເຮົາ ກໍ່ນັບວ່າເປັນສິ່ງໜຶ່ງທີ່ມີຄວາມສຳຄັນ ໂດຍສະເພາະການສ້າງສັນຜະລິດຕະພັນທາງວິຊາການຕ່າງໆ ທີ່ເປັນນະວັດຕະກຳຂຶ້ນມາຈຶ່ງໄດ້ກາຍເປັນບູລິມະສິດໜຶ່ງໃນວຽກງານພັດທະນາຂີດຄວາມສາມາດຂອງຄູສອນ ເວົ້າລວມເວົ້າສະເພາະກໍ່ຄືຄູສອນສັງກັດໃນຄະນະສຶກສາສາດຂອງພວກເຮົາ.

ໃນການຈັດການຮຽນ-ການສອນ ຂອງຄູນັ້ນ ຍ່ອມມີຫຼາກຫຼາຍວິທີການທີ່ຄູຜູ້ສອນສາມາດເລືອກໃຊ້ຕາມຄວາມເໝາະສົມກັບລາຍວິຊາ ແລະ ຄວາມຖະນັດຂອງຕົນເອງ ເຊິ່ງຈາກປະສົບການສັງເກດຕິດຕາມບັນດາວິທີການສອນຕ່າງໆທີ່ຄູຂອງພວກເຮົານຳໃຊ້ນັ້ນພົບວ່າລ້ວນແຕ່ມີຂໍ້ດີ ແລະ ຂໍ້ເສຍຄົນລະດ້ານກັນ ແຕ່ສິ່ງໜຶ່ງທີ່ພວກເຮົາພົບເຖິງຄວາມຄ້າຍຄືກັນຂອງບັນດາວິທີການສອນເຫຼົ່ານັ້ນກໍ່ຄື ເປົ້າຍຂອງການສອນ ທີ່ສ່ວນໃຫຍ່ແລ້ວແມ່ນຈະເນັ້ນໜັກໄປທີ່ການສ້າງໃຫ້ນັກສຶກສາສາມາດສະຫຼຸບ ຫຼື ສັງລວມບົດຮຽນຕ່າງໆໃຫ້ໄດ້ໂດຍຫຍໍ້ ຫຼື ບາງກໍລະນີ ກໍ່ແມ່ນເປັນການສະຫຼຸບເນື້ອໃນສຳຄັນຫຼັກໆໃຫ້ນັກຮຽນຮັບຊາບ...; ເຊິ່ງວິທີການເຫຼົ່ານີ້ເວົ້າອີກຢ່າງໜຶ່ງກໍ່ຄື ເປັນການສ້າງ "ປະສົບການສຳເລັດຮູບ" ໃຫ້ກັບນັກຮຽນ ເຊິ່ງສຳລັບຫຼາຍເນື້ອໃນລາຍວິຊາອາດຈະມີຄວາມເໝາະສົມ ແຕ່ກັບບາງວິຊາແລ້ວ ອາດຈະຍັງບໍ່ທັນສອດຄ່ອງກັບຈຸດປະສົງຂອງການສອນວິຊານັ້ນໆພໍປານໃດ ໂດຍສະເພາະລາຍວິຊາໃນສາຍວິທະຍາສາດການເມືອງ ທີ່ຈຸດປະສົງຂອງການສອນນັ້ນ ບໍ່ໄດ້ພຽງແຕ່ເນັ້ນໃຫ້ນັກສຶກສາກຳແໜ້ນບົດຮຽນສຳຄັນໂດຍຫຍໍ້ໄດ້. ແຕ່ຫາກເປັນການສ້າງໃຫ້ເຂົາເຈົ້າເກີດການວິເຄາະ ກົກປາຍສາເຫດ ແລະ ແນວໂນ້ມຂອງປະກົດການທາງສັງຄົມໃນແຕ່ລະໄລຍະປະຫວັດສາດໄດ້ ແລະ ຄວາມຕ້ອງການແບບນີ້ເອງທີ່ຍັງມີຫຼາຍເຕັກນິກວິທີການສອນບໍ່ສາມາດຕອບໂຈດຄວາມຕ້ອງການຂັ້ນນີ້ໄດ້.

ໂດຍສືບເນື່ອງຈາກຄວາມຕ້ອງການທາງວິຊາການທີ່ກ່າວມາຂ້າງເທິງນີ້ ທາງທີມງານຂອງພວກເຮົາກໍ່ໄດ້ມີການທົດລອງສ້າງແບບແຜນກິດຈະກຳການສອນແບບຕ່າງໆຫຼາຍຮູບການດ້ວຍກັນ ພ້ອມທັງນຳເອົາໄປທົດລອງກັບກຸ່ມນັກສຶກສາ ເພື່ອຫາຂໍ້ບົກບ່ອງ ແລະ ປັບປຸງຕາມປະສົບການທີ່ຄົ້ນພົບ ເຊິ່ງໃນເບື້ອງຕົ້ນພວກເຮົາສາມາດສັງລວມບັນດາກິດຈະກຳທີ່ສາມາດເຮັດໃຫ້ນັກສຶກສາເກີດຄວາມເຂົ້າໃຈເຖິງພື້ນຖານມູນເຫດຕ່າງໆ ແລ້ວນຳມາໃຊ້ເປັນຂໍ້ມູນປະກອບການວິເຄາະປະກົດການທີ່ກຳລັງຮຽນຢູ່ນັ້ນ ເຊິ່ງເປັນການຄົ້ນພົບຄວາມຮູ້ດ້ວຍຕົນເອງ ແລ້ວ ນຳເອົາສິ່ງທີ່ຄົ້ນພົບນັ້ນມາສັງເຄາະຕໍ່ຍອດໃຫ້ເກີດຄວາມຮູ້ໃໝ່ເລື້ອຍໆ ເຊິ່ງເອີ້ນວ່າ "ການຮຽນຮູ້ຜ່ານຄວາມສຳພັນເຫດການ".

ຍ້ອນເຫັນໄດ້ທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນຂອງຮູບແບບການຈັດກິດຈະກຳການຮຽນ-ການສອນແບບນີ້ ທາງທີມງານຂອງພວກເຮົາຈຶ່ງມີຄວາມຕ້ອງການພັດທະນາຮູບແບບການຮຽນຮູ້ລັກສະນະນີ້ ສຳລັບນັກສຶກສາ ແລະ ຄູ-ອາຈານຂຶ້ນມາພາຍໃນຄະນະສຶກສາສາດ ເຊິ່ງໃນການວິໄຈຄັ້ງນີ້ ແມ່ນເປັນການນຳເອົາແຜນກິດຈະກຳຄວາມສຳພັນເຫດການນີ້ ເຂົ້າທົດລອງໃນການຈັດກິດຈະກຳການຮຽນ-ການສອນ ວິຊາ "ປະຫວັດ ແລະ ຂະບວນກຳມະກອນສາກົນ" ເຊິ່ງເປັນວິຊາໜຶ່ງໃນຫຼັກສູດຄູວິທະຍາສາດການເມືອງ ສ່ວນສາເຫດທີ່ເລືອກເອົາວິຊານີ້ ກໍ່ເພາະວ່າເປັນວິຊາທີ່ມີຄວາມສັບຊ້ອນທາງດ້ານເນື້ອໃນທີ່ບູລະນາການຫຼາຍສາຂາວິຊາເຂົ້າດ້ວຍກັນ.

## 2. ເຄື່ອງມື ແລະ ວິທີການຄົ້ນຄວ້າ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄ້ວາຄັ້ງນີ້ ປະກອບມີ 3 ເຄື່ອງມືຄື:

❶ ແຜນກິດຈະກຳການສອນ ທີ່ສ້າງຂຶ້ນຕາມຮູບແບບການຮຽນຮູ້ KEM

❷ ແບບທົດທົດສອບວັດຜົນສຳເລັດທາງການຮຽນ ຂອງນັກສຶກສາ ພາຍຫຼັງຈັດການສອນຕາມຮູບແບບການຮຽນຮູ້ KEM ເຊິ່ງປະກອບມີ 2 ແບບຄື: ແບບທົດສອບກ່ອນການທົດລອງ ແລະ ແບບທົດສອບຫຼັງການທົດລອງ ດ້ວຍຈຳນວນຄຳຖາມລວມ 30 ຂໍ້ ໃນຮູບແບບຂອງການເລືອກຕອບ (Mutiple choice)

❸ ແບບວັດທັດສະນະຄະຕິ ຂອງນັກສຶກສາທີ່ມີຕໍ່ການຈັດກິດຈະກຳຮຽນຮູ້ຕາມແບບ KEM ເຊິ່ງລວມ 75 ຄຳຖາມ ແບບປະເມີນຄ່າ (Rating scale) ເພື່ອປະເມີນທັດສະນະຄະຕິຂອງນັກສຶກສາຕໍ່ກັບທັງ 6 ດ້ານຄື: ດ້ານເຕັກນິກການສອນ, ດ້ານການຈັດກິດຈະກຳການຮຽນຮູ້, ດ້ານສະພາບແວດລ້ອມ ແລະ ບັນຍາກາດການຮຽນຮູ້, ດ້ານການນຳໃຊ້ສື່ການສອນ, ດ້ານການວັດ ແລະ ປະເມີນຜົນ ແລະ ດ້ານຄວາມຄິດເຫັນຕໍ່ກັບຮູບແບບການຮຽນຮູ້ KEM

**2.2 ວິທີການຄົ້ນຄວ້າ**

ກຸ່ມເປົ້າໝາຍໃນການຄົ້ນຄວ້າຄັ້ງນີ້ ເປັນນັກສຶກສາຄູວິທະຍາສາດການເມືອງປີສຸດທ້າຍຈຳນວນ 2 ຮຸ່ນ ຄື ຮຸ່ນຈົບສົກສຶກສາ 2018 – 2019 ຈຳນວນ 32 ຄົນ ຍິງ 15 ຄົນ ແລະ ຮຸ່ນຈົບສົກສຶກສາ 2019-2020 ຈຳນວນ 26 ຄົນ ຍິງ 11 ຄົນ ລວມທັງໝົດ 58 ຄົນ ຍິງ 24 ຄົນ; ຕົວປ່ຽນທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ປະກອບມີ 1 ຕົວປ່ຽນຕາມ ແລະ 3 ຕົວປ່ຽນຕົ້ນ ຄື:

- ຕົວປ່ຽນຕົ້ນ: ການນຳໃຊ້ຮູບແບບການຮຽນຮູ້ KEM ເຂົ້າໃນການສອນ ວິຊາປະຫວັດຂະບວນກຳມະກອນສາກົນ ສຳລັບນັກສຶກສາຄູວິທະຍາສາດການເມືອງປີສຸດທ້າຍ.

- ຕົວປ່ຽນຕາມ: ປະສິດທິພາບຂອງແຜນກິດຈະກຳການສອນດ້ວຍຮູບແບບ KEM, ດັດສະນີປະສິດທິຜົນການຮຽນຂອງນັກສຶກສາ (E.I) ແລະ ທັດສະນະຄະຕິຂອງນັກສຶກສາຕໍ່ກັບການຮຽນຮູ້ແບບ KEM

ການວິເຄາະຂໍ້ມູນສຳລັບການດຳເນີນການວິໄຈຄັ້ງນີ້ຄະນະຜູ້ວິໄຈໄດ້ ,ນຳໃຊ້ໂປແກມສຳເລັດຮູບ SPSS ເພື່ອຄຳນວນວິເຄາະຫາຜົນລັບຕ່າງໆ ຕາມຈຸດປະສົງ ແລະ ຂໍ້ມູນທີ່ໄດ້ຈາກຊຸດຄຳຖາມທັງ 3 ເຄື່ອງມືເຊັ່ນ:

❶ ວິເຄາະຫາເປີເຊັນ (%), ຄ່າສະເລ່ຍ ($\bar{x}$) ແລະ ຄ່າຜັນປ່ຽນມາດຖານ (S.D) ເພື່ອຫາປະສິດທິພາບຂະບວນການ ແລະ ປະສິດທິພາບປະຈັກຂອງແຜນກິດຈະກຳຮຽນຮູ້ແບບ KEM

❷ ວິເຄາະຫາດັດສະນີປະສິດທິຜົນການຮຽນ (E.I) ຂອງກຸ່ມເປົ້າໝາຍ

❸ ວິເຄາະຫາເປີເຊັນ (%), ຄ່າສະເລ່ຍ ($\bar{x}$) ແລະ ຄ່າຜັນປ່ຽນມາດຖານ (S.D) ເພື່ອປະເມີນທັດສະນະຄະຕິຂອງນັກສຶກສາ ທີ່ມີຕໍ່ການຈັດການຮຽນຮູ້ຕາມແບບ KEM

**2.3 ຂອບເຂດແນວຄວາມຄິດຂອງການຄົ້ນຄວ້າ**



**3. ຜົນໄດ້ຮັບ**

ຂໍ້ມູນທີ່ໄດ້ຈາກການຄົ້ນຄວ້າຄັ້ງນີ້ ແມ່ນມີດັ່ງນີ້:

❶ ແຜນກິດຈະກໍາການສອນ ຕາມຮູບແບບ KEM ທີ່ນໍາມາຈັດກິດຈະກໍາການຮຽນຮູ້ວິຊາປະຫວັດຂະບວນການກອມມູນິດ ແລະ ນກໍາມະກອນສາກົນ ແມ່ນມີປະສິດທິພາບ (E1/E2) ເທົ່າກັບ 78.22/78.78

❷ ດັດຊະນີປະສິດທິຜົນການຮຽນ ວິຊາປະຫວັດ ແລະ ຂະບວນກໍາມະກອນສາກົນ ຂອງນັກສຶກສາ ທີ່ຮຽນຜ່ານຮູບແບບ KEM ແມ່ນມີຄ່າເທົ່າກັບ 0.68243

❸ ທັດສະນະຄະຕິຂອງນັກສຶກສາ ຕໍ່ກັບກິດຈະກໍາການຮຽນແບບ KEM ແມ່ນໃນລະດັບ $\bar{X} = 3.61$ , $S.D = 0,55$

ຈາກຂໍ້ມູນຜົນການວິເຄາະພວກເຮົາສາມາດອະທິບາຍໄດ້ວ່າ:

ແຜນກິດຈະກໍາການສອນແບບ KEM ແມ່ນມີປະສິດທິພາບ ດັ່ງຕາຕະລາງ 1 ລຸ່ມນີ້:

**ຕາຕະລາງ 1:** ສະແດງເຖິງຜົນການວິເຄາະຂໍ້ມູນກ່ຽວກັບ ປະສິດທິພາບຂອງການຈັດການຮຽນການສອນວິຊາປະຫວັດຂະບວນການກອມມູນິດ ແລະ ກໍາມະກອນສາກົນ ທີ່ຂຽນຂຶ້ນຕາມຮູບແບບການຮຽນຮູ້ຜ່ານຄວາມສໍາພັນເຫດການ KEM

| ຈໍານວນນັກຮຽນ | ຄະແນນທົດສອບຍ່ອຍ | | | ແບບວັດຜົນສໍາເລັດ | | | |
|---|---|---|---|---|---|---|---|
| | ຄະແນນເຕັມ | $\bar{X}$ | $E_1$ | ຄະແນນເຕັມ | $\bar{X}$ ກ່ອນ | $\bar{X}$ ຫຼັງ | $E_2$ |
| **58** | **60** | **49.93** | **78.22** | **30** | **14.17** | **25.13** | **78.78** |

ຈາກຕາຕະລາງ 1: ພົບວ່າຜົນການທົດສອບຍ່ອຍຂອງນັກສຶກສາ ໃນລະຫວ່າງການຈັດການຮຽນການສອນ ວິຊາປະຫວັດຂະວບການກອມມູນິດ ແລະ ກໍາມະກອນສາກົນ ແມ່ນມີຄະແນນສະເລ່ຍທີ 49.73 ຈາກຄະແນນເຕັມຈໍານວນ 60 ຄະແນນ ໂດຍມີປະສິດທິພາບທາງຂະບວນການ ທີ່ລະດັບ 78.22 ຫຼື E1= 78.22 ແລະຄະແນນສະເລ່ຍຂອງການວັດຈາກແບບວັດຜົນສໍາເລັດ ກ່ອນການຮຽນ ແມ່ນຢູ່ທີ່ 14.77 ໃນຂະນະທີ່ຄະແນນຈາກການທົດສອບຫຼັງການຮຽນນັ້ນ ແມ່ນຢູ່ທີ່ 25.13 ຈາກຈໍານວນຄະແນນເຕັມ 30 ຄະແນນ ໂດຍມີປະສິດທິພາບທາງປະຈັກ ທີ່ລະດັບ78.78 ຫຼື E2=78.78 (E1/E2=78.22/78.78)

**ຕາຕະລາງ 2:** ສະແດງເຖິງຜົນການວິເຄາະຫາດັດສະນີປະສິດທິຜົນ **E.I** ການຮຽນວິຊາປະຫວັດຂະບວນການກອມມູນິດ ແລະ ກໍາມະກອນສາກົນ ຂອງນັກສຶກສາຄູວິທະຍາສາດການເມືອງ ທີ່ພາຍຫຼັງການຈັດການຮຽນຮູ້ຕາມຮູບແບບ KEM

| ຈໍານວນນັກຮຽນ | ຈໍານວນນັກຮຽນ ຄູນຄະແນນເຕັມ | ຜົນລວມຂອງຄະແນນສອບ | | E.I | ເປີເຊັນ (%) |
|---|---|---|---|---|---|
| | | ກ່ອນຮຽນ | ຫຼັງຮຽນ | | |
| **58** | **58 x 30** | **425** | **754** | **0.69263** | **69.26** |

ຈາກຕາຕະລາງ 2 ພົບວ່າ ຜົນຄະແນນການທົດສອບລວມ ກ່ອນການຈັດການຮຽນຮູ້ແບບ KEM ຂອງນັກຮຽນ ແມ່ນເທົ່າກັບ 425 ແລະ ຜົນຄະແນນລວມທົດສອບຫຼັງການຈັດການຮຽນຮູ້ ແມ່ນເທົ່າກັບ 754 ຈາກຄະແນນເຕັມ 30 ຄະແນນ ແລະຈໍານວນນັກສຶກສາທັງໝົດ 58 ຄົນ. ສາມາດວິເຄາະຫາດັດສະນີປະສິດທິຜົນການຮຽນ E.I = 0.69263 ໝາຍຄວາມວ່າ ພາຍຫຼັງການຈັດການຮຽນ-ການສອນວິຊາປະຫວັດຂະບວນການກອມມູນິດ ແລະ ກໍາມະກອນສາກົນ ໂດຍຮູບແບບການຮຽນຮູ້ KEM ນັກສຶກສາມີຄວາມກ້າວໜ້າທາງການຮຽນໃນລະດັບ 69.26%

**ຕາຕະລາງ 3:** ສະແດງເຖິງຜົນການວິເຄາະປະເມີນທັດສະນະຄະຕິ ແລະ ຄຳຄິດເຫັນ ຂອງນັກສຶກສາທີ່ມີຕໍ່ການຈັດການຮຽນ-ການສອນ ຂອງຄູໂດຍໃຊ້ຮູບແບບການຮຽນຮູ້ KEM

| ລ/ດ | ເນື້ອໃນ | $\bar{x}$ | S.D | ແປຄວາມໝາຍ |
|---|---|---|---|---|
| **1** | ດ້ານເຕັກນິກການສອນ | 3.25 | 0.75 | ເຫັນດີປານກາງ |
| **2** | ດ້ານການຈັດກິດຈະກຳການຮຽນຮູ້ | 4.11 | 0.45 | ເຫັນດີຫຼາຍ |
| **3** | ດ້ານສະພາບແວດລ້ອມ ແລະ ບັນຍາກາດການຮຽນຮູ້ | 3.65 | 0.55 | ເຫັນດີຫຼາຍ |
| **4** | ດ້ານການນຳໃຊ້ສື່ການສອນ | 3.71 | 0.47 | ເຫັນດີຫຼາຍ |
| **5** | ດ້ານການວັດ ແລະ ປະເມີນຜົນ | 3.45 | 0.55 | ເຫັນດີປານກາງ |
| **6** | ດ້ານຄວາມຄິດເຫັນຕໍ່ກັບ KEM | 3.52 | 0.56 | ເຫັນດີຫຼາຍ |
| | **ລວມສະເລ່ຍ** | **3.61** | **0.55** | ເຫັນດີຫຼາຍ |

ຈາກຕາຕະລາງ 3 ເຫັນວ່າ ໂດຍລວມນັກສຶກສາມີທັດສະນະຄະຕິຕໍ່ກັບ ວິທີການຈັດການຮຽນຮູ້ແບບ KEM ໃນລະດັບທີ່ດີຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ 3.61 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.55 ໂດຍເມື່ອແຍກເປັນຕາມແຕ່ລະດ້ານແລ້ວຈະເຫັນວ່າບໍ່ມີຄວາມແຕກຕ່າງກັນຫຼາຍຢ່າງມີໄນຍະສຳຄັນ ໂດຍອັນດັບທີ1 ໄດ້ແກ່ ດ້ານການນຳໃຊ້ສື່ການສອນ ມີຄ່າສະເລ່ຍເທົ່າກັບ ແລະ ຄ່າຜັນປ່ຽນມາດຖານເທົ່າກັບ ; ຕໍ່ມາແມ່ນດ້ານເຕັກນິກການສອນ ມີຄ່າສະເລ່ຍເທົ່າ ແລະ ຄ່າຜັນປ່ຽນມາດຖານເທົ່າ ; ຕາມມາດ້ວຍດ້ານການຈັດກິດຈະກຳການຮຽນຮູ້ ມີຄ່າສະເລ່ຍເທົ່າ ແລະ ຄ່າຜັນປ່ຽນມາດຖານເທົ່າ; ດ້ານຄວາມຄິດເຫັນຕໍ່ກັບຮູບແບບການຮຽນຮູ້ KEM ແມ່ນມີຄ່າສະເລາຍເທົ່າກັບ ແລະ ຄ່າຜັນປ່ຽນມາດຖານເທົ່າກັບ ; ດ້ານສະພາບແວດລ້ອມ ແລະ ບັນຍາກາດການຮຽນຮູ້ ແລະ ດ້ານການວັດ-ປະເມີນຜົນ ແມ່ນມີຄ່າສະເລ່ຍເທົ່າກັນທີ່ ແລະ ຄ່າຜັນປ່ຽນມາດຖານເທົ່າ ແລະ ຕາມລຳດັບ.

## 4. ສະຫຼຸບ

❶ ແຜນກິດຈະກຳການຮຽນຮູ້ແບບ KEM ທີ່ນຳມາຈັດກິດຈະກຳການຮຽນຮູ້ວິຊາ ປະຫວັດຂະບວນການກອມມູນິດ ແລະ ກຳມະກອນສາກົນ ແມ່ນມີປະສິດທິພາບ (E1/E2) ເທົ່າກັບ 78.22/78.78 ເຊິ່ງເຫັນວ່າຍັງບໍ່ເປັນໄປຕາມເກນທີ່ວາງໄວ້ ທີ່ລະດັບ 80/80

❷ ດັດຊະນີປະສິດທິຜົນການຮຽນ ວິຊາປະຫວັດຂະບວນການກອມມູນິດ ແລະ ກຳມະກອນສາກົນ ຂອງນັກສຶກສາທີ່ເຂົ້າຮ່ວມຮຽນຮູ້ ຕາມຮູບແບບ KEM ແມ່ນມີຄ່າເທົ່າກັບ 0.68243 ໝາຍຄວາມ ສະແດງວ່າ ນັກສຶກສາມີຄວາມຮູ້ເພີ່ມຂຶ້ນຈາກກ່ອນຮຽນ ເທົ່າກັບ 69.26%

❸ ທັດສະນະຄະຕິຂອງນັກສຶກສາ ຕໍ່ກັບກິດຈະກຳການຮຽນຮູ້ແບບ KEM ແມ່ນຢູ່ໃນລະດັບ $\bar{X} = 3.61$ , $S.D = 0{,}55$ ເຊິ່ງຖືວ່າຢູ່ໃນລະດັບດີຫຼາຍ

## 5. ຄຳຂອບໃຈ

ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງມາຍັງການນຳຂອງ ຄະນະສຶກສາສາດ ກໍ່ຄືມະຫາວິທະຍາໄລສຸພານຸວົງ ທີ່ໃຫ້ໂອກາດ ແລະ ອຳນວຍຄວາມສະດວກໃນການສຶກສາຄົ້ນຄວ້າຄັ້ງນີ້ ບໍ່ວ່າຈະເປັນທາງດ້ານສະຖານທີ່, ຄຳແນະນຳ ແລະ ຂໍ້ຄິດເຫັນຕ່າງໆທີ່ເປັນຜົນປະ ໂຫຍດໃນການເຮັດບົດຄົ້ນຄວ້າຈົນໄດ້ຮັບຜົນສຳເລັດໄປດ້ວຍດີ. ຂໍຂອບໃຈມາຍັງ ທີມງານຄົ້ນຄວ້າທຸກໆທ່ານ ທີ່ໄດ້ເອົາໃຈໃສ່ຮ່ວມມືກັນ ບໍ່ວ່າຈະເປັນທາງດ້ານທຶນຮອນ ແລະ ຄວາມຮູ້ ຄວາມສາມາດ ເຂົ້າໃນການສຶກສາຄົ້ນຄວ້າມາໂດຍຕະຫຼອດ ແລະ ຂອບໃຈມາຍັງນັກສຶກສາທີ່ໄດ້ສະຫຼະເວລາໃນການໃຫ້ຄວາມຮ່ວມມືໃນການສະໜ

ອງຂໍ້ມູນໃຫ້ແກ່ທີມງານຂອງພວກຂ້າພະເຈົ້າ ຈົນປະສົບຜົນສໍາເລັດໃນຄັ້ງນີ້ດ້ວຍ.

**6. ເອກະສານອ້າງອີງ**

ກະຊວງສຶກສາທິການ ແລະ ກິລາ. (2016). ວິໄສທັດຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025. ວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ຄະນະສຶກສາສາດ. (2018). ວິທີສອນວິທະຍາສາດການເມືອງ. ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (1992). ແນະນໍາການສອນວິຊາສຶກສາພົນລະເມືອງ. ວຽງຈັນ: ສວສ.

ສຸຮາງ ໂຄຕຣະກູລ. (2009). ຈິດຕະວິທະຍາການສຶກສາ. ມະຫາວິທະຍາໄລຈຸລາລົງກອນ.

ອາພອນ ໃຈທ່ຽງ. (2007). ຫຼັກການສອນ. ສໍານັກພິມໂອດຽນສໂຕຣ